**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ
ຫ້ອງການ

ເລກທີ: 0316 ກຜທ.ຫກ3
ນະຄອນຫຼວງວຽງຈັນ,ວັນທີ : 01 ກຸມພາ 2024

# ໜັງສືເຊີນ

ເຖິງ: ບັນດາບໍລິສັດ,ຫ້າງຮ້ານ ແລະ ຜູ້ປະກອບການກ່ຽວກັບເຄື່ອງໃຊ້ຫ້ອງການ

ເລື່ອງ: ເຊີນເຂົ້າຮ່ວມແຂ່ງຂັນປະມູນສົມທຽບລາຄາ(ແບບເປີດກວ້າງ) ສໍາລັບການສະໜອງເຄື່ອງໃຊ້ຫ້ອງການ ໃຫ້ແກ່ກະຊວງແຜນການ ແລະ ການລົງທຶນ ປະຈໍາປີ 2024

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ກະຊວງຜທ ສະບັບເລກທີ 0234/ກຜທ, ລົງວັນທີ 02 ກຸມພາ 2022

ຫ້ອງການ ກະຊວງແຜນການ ແລະ ການລົງທຶນ ຂໍຖືເປັນກຽດເຊີນ ບັນດາບໍລິສັດ, ຫ້າງຮ້ານ ແລະ ຜູ້ປະກອບການກ່ຽວກັບເຄື່ອງໃຊ້ຫ້ອງການ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນເພື່ອສະໜອງເຄື່ອງໃຊ້ຫ້ອງການໃຫ້ແກ່ ກະຊວງແຜນການ ແລະ ການລົງທຶນ ປະຈໍາປີ 2024, ເຊິ່ງມີລາຍລະອຽດ ແລະ ເງື່ອນໄຂດັ່ງນີ້:

1. ກະຊວງແຜນການ ແລະ ການລົງທຶນ ໄດ້ຮັບອະນຸມັດງົບປະມານຂອງລັດ ປະຈໍາປີ 2024 ເພື່ອດໍາເນີນການຈັດຊື້ ແລະ ຈັດຈ້າງການບໍລິການໃຫ້ແກ່ກະຊວງແຜນການ ແລະການລົງທຶນ ດ້ວຍການດໍາເນີນການປະມູນສົມທຽບລາຄາ.
2. ກະຊວງແຜນການ ແລະ ການລົງທຶນ ຈຶ່ງຂໍເຊີນບັນດາບໍລິສັດ, ຫ້າງ/ຮ້ານ ທີ່ສົນໃຈ ແລະ ຜູ້ປະກອບການກ່ຽວກັບເຄື່ອງໃຊ້ຫ້ອງການທີ່ມີເງື່ອນໄຂຄົບຖ້ວນເຂົ້າຍື່ນການປະມູນດ້ວຍການສົມທຽບລາຄາແບບເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017.
3. ການປະມູນຄັ້ງນີ້ ແມ່ນເປີດກ້ວາງໃຫ້ທຸກໆບໍລິສັດ, ຫ້າງ/ຮ້ານ ຂອງນິຕິບຸກຄົນພາຍໃນທີ່ດໍາເນີນທຸລະກິດຢູ່ໃນນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ມີເລກປະຈໍາຕົວເສຍອາກອນ ແລະ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ຖືກຕ້ອງຕາມກົດໝາຍ.
4. ບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບເຄື່ອງໃຊ້ຫ້ອງການ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນຊື້ເອກະສານປະມູນຄົບຊຸດໄດ້ທີ່ພະແນກບໍລິຫານ ແລະ ພິທີການ ຫ້ອງການ ກະຊວງແຜນການ ແລະ ການລົງທຶນ(ໂທລະສັບ: **856-21 216562**,020 55514536,020 29991160) ສໍານັກງານຕັ້ງຢູ່ຖະໜົນສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນໃນໂມງລັດຖະການ 8:00-12:00ໂມງແລະ13:30-16:00ໂມງ, ເລີ່ມຂາຍຊອງປະມູນແຕ່ວັນທີ 2 ກຸມພາ 2024 ເປັນຕົ້ນໄປ ຮອດວັນທີ 15 ກຸມພາ 2024 ລາຄາຊອງປະມູນ ຊອງລະ 500,000 ກີບ (ຫ້າແສນກີບຖ້ວນ) ຈໍານວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ.
5. ກໍານົດສົ່ງຊອງປະມູນ ຕ້ອງສົ່ງໃຫ້ ພະແນກບໍລິຫານ ແລະ ພິທີການ ຫ້ອງການ ກະຊວງແຜນການ ແລະ ການລົງທຶນ ກ່ອນເວລາ**13:00** ໂມງຂອງວັນທີ 16 ກຸມພາ 2024, ຖ້າຊອງປະມູນໃດສົ່ງຊ້າກວ່າເວລາທີ່ກໍານົດໄວ້ ຈະບໍ່ຮັບເອົາ

ແລະຈະສົ່ງຄືນໂດຍບໍ່ມີການເປີດຊອງປະມູນ. ກຳນົດເປີດຊອງປະມູນແມ່ນເວລາ14:00 ໂມງຂອງວັນທີ 16 ກຸມພາ 2024,ທີ່ຫ້ອງປະຊຸມຫ້ອງການ ຊັ້ນ I ຕຶກ 4 ຊັ້ນ ກະຊວງ ຜທ.

6. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນມາພ້ອມໃນມູນຄ່າ (ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ຍື່ນຊອງປະມູນ). ໜັງສືຄ້ຳປະກັນການປະມູນ ຕ້ອງແມ່ນໜັງສືຄ້ຳປະກັນຂອງທະນາຄານ ທີ່ຖືກຕ້ອງກັບແບບຟອມ ທີ່ກຳນົດໄວ້ຢູ່ໃນເອກະສານປະມູນ.

ດັ່ງນັ້ນ, ຈຶ່ງເຊີນມາຍັງທ່ານຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນເຄື່ອງໃຊ້ຫ້ອງການ ຕາມວັນເວລາດັ່ງກ່າວດ້ວຍ.

ຫົວໜ້າຫ້ອງການ

ອຸດົມແກ້ວ ແກ້ວດວງສີ